

Programmer Officer ຈຳນວນ 4 ຕຳແໜ່ງ ປະຈຳການ ສູນບໍລິການອີເລັກໂທຼນິກ ແລະ ຜະລິດຕະພັນບັດ ທຄຕລ ສຳນັກງານໃຫຍ່

ໜ້າທີ່ຮັບຜິດຊອບຫຼັກ:

- ພັດທະນາ, ກວດສອບຄວາມປອດໄພ, ແກ້ໄຂບັນຫາ ລະບົບຮອງຮັບການສ້າງຜະລິດຕະພັນ ແລະ ການບໍລິການໃໝ່ໆຂອງ ທຄຕລ;
- ພັດທະນາ ແລະ ປັບປຸງລະບົບທີ່ມີຢູ່ແລ້ວໃຫ້ດີຂຶ້ນເຊັ່ນ: BCEL One, SmartVAT, SmartTax, BCOME ເປັນຕົ້ນ;
- ພັດທະນາເຄື່ອງມືອຳນວຍຄວາມສະດວກໃຫ້ແກ່ພະນັກງານພາຍໃນສູນ ແລະ ພາຍໃນ ທຄຕລ;
- ກວດສອບ ແລະ ທົດລອງຜະລິດຕະພັນກ່ອນຈະມີການເປີດການນຳໃຊ້;
- ປະຕິບັດໜ້າທີ່ອື່ນໆ ຕາມການຈັດຕັ້ງມອບໝາຍ.

ມາດຖານ ແລະ ເງື່ອນໄຂຂອງຜູ້ສະໝັກ:

- **ເພດ:** ຊາຍ/ຍິງ, ອາຍຸ 21- 35 ປີ (ເກີດລະຫວ່າງປີ 1991 ຫາ 2005);
- **ລະດັບການສຶກສາ:** ຮຽນຈົບຊັ້ນສູງຂຶ້ນໄປ ໃນສາຂາວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ, ການພັດທະນາໂປຼແກຼມ, ການພັດທະນາເວັບໄຊ, ວິສະວະກຳຄອມພິວເຕີ ແລະ ສາຂາອື່ນໆທີ່ກ່ຽວຂ້ອງກັບໄອທີ;
- **ຄະແນນສະເລ່ຍຮຽນຈົບພາຍປະເທດ**: CGPA 2,70/4,00 ຫຼື 6,75/10 ຂຶ້ນໄປ ຫຼື ທຽບເທົ່າ,
- **ຄະແນນສະເລ່ຍຮຽນຈົບຕ່າງປະເທດ:** CGPA 2,50/4,00 ຫຼື 6/10 ຂຶ້ນໄປ ຫຼື ທຽບເທົ່າ;
- ມີຄວາມຮູ້ໃນພາສາໂປຼແກຼມໃດໜຶ່ງເຊັ່ນ: Java, nodejs (JavaScript), python, php, C#, VB, dart, golang;
- ຮູ້ນຳໃຊ້ຖານຂໍ້ມູນໃດໜຶ່ງເຊັ່ນ: Oracle, MariaDB, MySQL, PostgreSQL;
- ມີຄວາມຮູ້ດ້ານພາສາອັງກິດ, ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງໃນລະດັບດີ (ເວົ້າ, ຂຽນ, ອ່ານ, ຟັງໄດ້ຄ່ອງແຄ້ວ).

ສະແກນ QR
ເພື່ອສະໝັກ

ເປີດຮັບສະໝັກ
12/10/2026 ເຖິງ 23/10/2026

ສອບຖາມຂໍ້ມູນໄດ້ທີ່ 021 213200 ຕໍ່ 417
Whatsapp: +856 2059591105

ວິທີສະໝັກວຽກ:

ການສະໝັກແມ່ນອອນລາຍຜ່ານເວັບໄຊ ຂອງ ທຄຕລ ເທົ່ານັ້ນ, ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈທີ່ຈະສະໝັກວຽກ ແມ່ນໃຫ້ອ່ານລາຍລະອຽດຂອງແຕ່ລະຕຳແໜ່ງງານ ແລະ ປະຕິບັດຕາມຂັ້ນຕອນລຸ່ມນີ້:

1. **ເຂົ້າໄປປະກອບແບບຟອມສະໝັກ** ທາງອອນລາຍໄດ້ທີ່ ເວັບໄຊຂອງ ທຄຕລ **www.bcel.com.la**

- **ສະໝັກວຽກ > ສະໝັກວຽກກັບ BCEL > ເລືອກຕຳແໜ່ງທີ່ຕົນເອງຕ້ອງການສະໝັກ> ຈາກນັ້ນປະກອບຂໍ້ມູນຂອງຕົນລົງແບບຟອມ.**
- ສຳລັບການປະກອບຂໍ້ມູນຂອງຜູ້ສະໝັກລົງໃນແບບຟອມ ຕ້ອງລະບຸທຸກຂໍ້ມູນໃຫ້ຄົບຖ້ວນຕາມແບບຟອມກຳນົດ ໂດຍສະເພາະອີເມວ ແລະ ເບີໂທ ຕ້ອງເປັນອີເມວ ແລະ ເບີໂທທີ່ນຳໃຊ້ປະຈຸບັນ ແລະ ເປີດນຳໃຊ້ປົກກະຕິ.
- **ເອກະສານທີ່ມີຄວາມຈຳເປັນໃນເບື້ອງຕົ້ນ ທີ່ຕ້ອງປະກອບລົງໃນແບບຟອມສະໝັກອອນລາຍມີ: (ເອກະສານຕ້ອງເປັນຮູບແບບຟາຍ PDF ຫຼື JPG)**

- ເອກະສານຢັ້ງຢືນຕົວຕົນ (ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື Passport) ຢ່າງໃດຢ່າງໜຶ່ງ ທີ່ຍັງບໍ່ໝົດອາຍຸນຳໃຊ້
- ໃບປະກາດວິຊາສະເພາະ ແລະ ໃບຄະແນນ
- ສຳລັບ **"ຜູ້ທີ່ສຳເລັດການສຶກສາແລ້ວ ແຕ່ຍັງບໍ່ໄດ້ຮັບໃບປະກາດ (ລໍຖ້າຮັບໃບປະກາດ)"** ແມ່ນສາມາດສະໝັກໄດ້ໂດຍນຳໃຊ້ ໃບຢັ້ງຢືນສຳເລັດການສຶກສາ (ໂດຍມີການລະບຸວ່າ ໄດ້ສຳເລັດການປ້ອງກັນປົດ ຫຼື ສອບເສັງຈົບຊັ້ນແລ້ວ) ພ້ອມດ້ວຍ ໃບຄະແນນ **ທີ່ບໍ່ແມ່ນໃບຢັ້ງຢືນການເປັນນັກສຶກສາ**
- ໃບຢັ້ງຢືນການເຂົ້າຮ່ວມການຝຶກອົບຮົມຕ່າງໆ ທີ່ເຫັນວ່າກ່ຽວຂ້ອງກັບໜ້າວຽກ (ຖ້າມີ)
- ໃບຢັ້ງຢືນລະດັບພາສາຕ່າງປະເທດໃດໜຶ່ງ ເຊັ່ນ: ພາສາອັງກິດ, ພາສາຈີນ ຫຼື ພາສາຫວຽດນາມ ແລະ ອື່ນໆ (ຖ້າມີ)

- ສ່ວນເອກະສານອື່ນໆ ທີ່ບໍ່ໄດ້ລະບຸ ແມ່ນບໍ່ຈຳເປັນຕ້ອງອັບໂຫຼດລົງແບບຟອມ ຊຶ່ງຜູ້ສະໝັກຈະໄດ້ປະກອບມາພາຍຫຼັງສອບເສັງ ແລະ ຖືກຄັດເລືອກເຂົ້າເປັນພະນັກງານແລ້ວ.

1. **ຜູ້ສະໝັກທີ່ໄດ້ປະກອບຂໍ້ມູນຕ່າງໆ**ໃນແບບຟອມສະໝັກທາງອອນລາຍ ສຳເລັດ ແລະ ຄົບຖ້ວນ **ຈະໄດ້ຮັບອີເມວ ຫຼື WhatsApp 020 59591105 ແຈ້ງລະຫັດ** ຈາກ ທຄຕລ ແຕ່ຖ້າບໍ່ໄດ້ຮັບການແຈ້ງລະຫັດຈາກ ທຄຕລ ແມ່ນໝາຍເຖິງສະໝັກບໍ່ສຳເລັດ ຫຼື ລະບົບມີການ Reject ອັດຕະໂນມັດ ຊຶ່ງສາມາດຕິດຕໍ່ສອບຖາມເພີ່ມຕື່ມໄດ້ກັບພະແນກຈັດຕັ້ງ-ພະນັກງານ ຕາມລາຍລະອຽດຂໍ້ທີ 7.
2. **ຜູ້ສະໝັກ 01 ຄົນ ສາມາດສະໝັກໄດ້ 01 ຕຳແໜ່ງ ເທົ່ານັ້ນ,** ຫາກພົບເຫັນລາຍຊື່ຢູ່ໃນຫຼາຍຕຳແໜ່ງ ທຄຕລ ຂໍສະຫງວນສິດເລືອກຕຳແໜ່ງທີ່ຜູ້ສະໝັກໄດ້ສົ່ງຟອມອອນລາຍລາຍການທຳອິດ ແລະ ເໝາະສົມ ອີງຕາມວັນເວລາທີ່ໄດ້ປະກອບຟອມອອນລາຍ.
3. **ຜູ້ສະໝັກຈະຕ້ອງເອົາໃຈໃສ່ໃນການບັນທຶກ ຫຼື ຈື່ຈຳ** ລະຫັດຂອງຕົນເອງຢ່າງລະອຽດ ເນື່ອງຈາກ ທຄຕລ ຈະແຈ້ງຂໍ້ມູນຜູ້ສະໝັກທີ່ຜ່ານການຄັດເລືອກໃຫ້ເຂົ້າສອບເສັງ ເປັນລະຫັດປະຈຳຕົວຂອງນັກສອບເສັງເທົ່ານັ້ນ (ຈະບໍ່ໄດ້ແຈ້ງຊື່ ແລະ ນາມສະກຸນນັກສອບເສັງ).

1. **ກຳນົດເວລາໃນການເປີດ-ປິດຮັບສະໝັກ:**

- ເປີດຮັບສະໝັກ **ອອນລາຍ ຜ່ານທາງເວັບໄຊ ທຄຕລ** ນັບວັນທີ **12/10/2026-23/10/2026 ປິດຮັບສະໝັກ**
- ສຳລັບຜູ້ທີ່ຜ່ານ ຫຼື ບໍ່ຜ່ານເງື່ອນໄຂ ເພື່ອເຂົ້າຮອບສອບເສັງ ຫຼື ສຳພາດ ທາງ ທຄຕລ ຈະແຈ້ງໃຫ້ຊາບຜ່ານອີເມວ ທີ່ຜູ້ສະໝັກໄດ້ໃຊ້ໃນການສະໝັກອອນລາຍ ແລະ ຈະແຈ້ງວັນເວລາ, ສະຖານທີ່ສອບເສັງຕື່ມຕາມພາຍຫຼັງ (ແຈ້ງເປັນລະຫັດທີ່ຜູ້ສະໝັກໄດ້ຮັບ).

2. **ຜູ້ສະໝັກຄົນໃດທີ່ໄດ້ປອມແປງ**ເອກະສານເພື່ອການສະໝັກ, ຫາກສືບຮູ້ພາຍຫຼັງວ່າໄດ້ມີການໃຫ້ຂໍ້ມູນທີ່ບໍ່ເປັນຄວາມຈິງແມ່ນຈະຖືກຕັດສິດບໍ່ໄດ້ຮັບການພິຈາລະນາເປັນພະນັກງານຂອງ ທຄຕລ ແລະ ຖືກດຳເນີນຄະດີຕາມກົດໝາຍ.
3. **ລາຍລະອຽດເພີ່ມເຕີມ** ສາມາດສອບຖາມໄດ້ທີ່ ພະແນກຈັດຕັ້ງ-ພະນັກງານ ໂທ: **021 213200-417 ຫຼື 418.**

ຜູ້ທີ່ຜ່ານການຄັດຟອມໃນເບື້ອງຕົ້ນທາງ ທຄຕລ ຈະຕິດຕໍ່ກັບ